**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

**ສະພາແຫ່ງຊາດ** ເລກທີ 04 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 21 ຕຸລາ 2003

# ກົດໝາຍ
# ວ່າດ້ວຍທີ່ດິນ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ ຂອງກົດໝາຍວ່າດ້ວຍທີ່ດິນ**

ຈຸດປະສົງ ຂອງກົດໝາຍວ່າດ້ວຍທີ່ດິນ ແມ່ນກຳນົດລະບອບການຄຸ້ມຄອງ, ການປົກປັກຮັກສາ ແລະ ການນຳໃຊ້ທີ່ດິນ ໃຫ້ມີປະສິດທິຜົນ, ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບກົດໝາຍ, ປະກອບສ່ວນເຂົ້າໃນການເພີ່ມທະວີການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລວມທັງປົກປັກຮັກສາສິ່ງແວດລ້ອມ ແລະ ເຂດນ້ຳແດນດິນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 2. ທີ່ດິນ**

ທີ່ດິນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນເນື້ອທີ່ດິນ ຊຶ່ງນອນຢູ່ໃນ ເຂດແດນ ຂອງ ສປປ ລາວ, ປະກອບດ້ວຍ ໜ້າດິນ, ພື້ນດິນ, ພູຜາ, ເກາະດອນ ລວມທັງດິນພື້ນນ້ຳ, ນ່ານນ້ຳ ແລະນ່ານຟ້າ.

ທີ່ດິນ ແຫ່ງ ສປປ ລາວ ແມ່ນຊັບພະຍາກອນອັນຕົ້ນຕໍຂອງຊາດ ທີ່ເປັນບ່ອນດຳລົງຊີວິດ ແລະ ທຳມາຫາກິນ ຂອງພົນລະເມືອງລາວ, ເປັນພາຫະນະອັນສຳຄັນ ແຫ່ງການຜະລິດ, ການພັດທະນາເສດ ຖະກິດ - ສັງຄົມ ແລະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 3. (ໃໝ່) ກຳມະສິດກ່ຽວກັບທີ່ດິນ**

ທີ່ດິນ ແຫ່ງ ສປປ ລາວ ເປັນກຳມະສິດ ຂອງວົງຄະນະຍາດແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງລັດຖະທຳມະນູນ ຊຶ່ງແມ່ນລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະເປັນເອກະພາບໃນທົ່ວປະເທດ ແລະ ມອບໃຫ້ບຸກຄົນ, ຄອບຄົວ ແລະການຈັດຕັ້ງເສດຖະກິດ ນຳໃຊ້,

ເຊົ່າ ຫຼື ສຳປະທານ; ມອບໃຫ້ກົມກອງປະກອບອາວຸດ, ອົງການຂອງລັດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ໃຊ້; ສຳລັບຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວນັ້ນ ແມ່ນໃຫ້ເຊົ່າ ຫຼື ສຳປະທານ.

**ມາດຕາ 4. (ໃໝ່) ການສົ່ງເສີມການພັດທະນາທີ່ດິນ**

ລັດສົ່ງເສີມທຸກພາກສ່ວນເສດຖະກິດ ແລະ ສັງຄົມ ປະກອບສ່ວນເຂົ້າໃນການພັດທະນາທີ່ດິນ ດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການ**ຕ່າງໆເຊັ່ນ** : ການສຶກສາອົບຮົມ ແລະ ການສ້າງຕັ້ງກອງທຶນ ເພື່ອປົກປັກຮັກສາ ແລະປັບປຸງທີ່ດິນ, ການສົ່ງເສີມການລົງທຶນດ້ານແຮງງານ, ວັດຖຸ, ທຶນຮອນ, ເຕັກໂນໂລຊີ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ການຄຸ້ມຄອງ-ບໍລິຫານທີ່ດີ ເພື່ອເຮັດໃຫ້ທີ່ດິນ ມີຄຸນນະພາບດີ ແລະ ມີມູນຄ່າເພີ່ມຂຶ້ນ.

**ມາດຕາ 5. ການປົກປ້ອງສິດຜົນປະໂຫຍດ ຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ**

ລັດປົກປ້ອງສິດຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນຢ່າງມີປະສິດທິຜົນ, ມີຄວາມສະຫງົບເປັນປົກກະຕິ ແລະ ຍາວນານ ພ້ອມທັງຮັບປະກັນສິດປົກປັກຮັກສາ, ສິດໃຊ້, ສິດໄດ້ຮັບໝາກຜົນ, ສິດໂອນ ແລະ ສິດສືບທອດ.

**ມາດຕາ 6. ການປົກປັກຮັກສາທີ່ດິນ ແລະ ສິ່ງແວດລ້ອມ**

ບຸກຄົນ ແລະ ການຈັດຕັ້ງ ລ້ວນແຕ່ມີພັນທະ ໃນການປົກປັກຮັກສາທີ່ດິນ ໃຫ້ຢູ່ໃນສະພາບທີ່ດີ, ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ຮັກສາຄຸນນະພາບ ໃຫ້ເໝາະສົມກັບແຕ່ລະປະເພດທີ່ດິນ, ບໍ່ເຮັດໃຫ້ເນື້ອທີ່ດິນ ແຕ່ລະປະເພດຫຼຸດລົງ ໂດຍບໍ່ໄດ້ຮັບອະນຸຍາດ.

ການໃຊ້ທີ່ດິນ ບໍ່ໃຫ້ມີຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ.

**ມາດຕາ 7. ການຫ້າມຈັບຈອງທີ່ດິນ**

ການຈັບຈອງທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ທີ່ໄດ້ເຮັດຂຶ້ນກ່ອນ ຫຼື ຫຼັງການປະກາດໃຊ້ ລັດຖະທຳມະນູນ ແລະກົດໝາຍສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ຫ້າມບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຈັບຈອງທີ່ດິນ; ຖ້າຫາກມີຈຸດປະສົງຢາກນຳໃຊ້ທີ່ດິນຕ້ອງ ໄດ້ຮັບອະນຸຍາດຈາກລັດ.

## ພາກທີ II
## ການຄຸ້ມຄອງທີ່ດິນ ແລະ ການຂຶ້ນທະບຽນທີ່ດິນ
### ໝວດທີ 1
### ການຄຸ້ມຄອງທີ່ດິນ

**ມາດຕາ 8. (ໃໝ່)** ອົງການຄຸ້ມຄອງທີ່ດິນ

ອົງການຄຸ້ມຄອງທີ່ດິນ ຢູ່ ສປປ ລາວ ປະກອບດ້ວຍ :

- ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ;
- ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ;
- ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ;
- ໜ່ວຍງານທີ່ດິນ ປະຈຳບ້ານ.

ສຳລັບພາລະບົດບາດ, ສິດ ແລະໜ້າທີ່ ຂອງອົງການຄຸ້ມຄອງທີ່ດິນນັ້ນ ລັດຖະບານເປັນຜູ້ກຳນົດ.

**ມາດຕາ 9. (ໃໝ່) ການຄຸ້ມຄອງທີ່ດິນ**

ລັດຄຸ້ມຄອງທີ່ດິນ ຢ່າງລວມສູນເປັນເອກະພາບໃນທົ່ວປະເທດ ໂດຍລັດຖະບານມອບໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເປັນຜູ້ຮັບຜິດຊອບຕາມໜ້າທີ່ ທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 10 ຂອງກົດໝາຍ ສະບັບນີ້ ດ້ວຍການປະສານສົມທົບ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນ ແລະມອບຄວາມຮັບຜິດຊອບຄຸ້ມຄອງ ການນຳໃຊ້ທີ່ດິນ ຕາມຂະແໜງການໃຫ້ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ຫັດຖະກຳ, ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 10. (ໃໝ່) ສິດ ແລະ ໜ້າທີ່ລວມ ຂອງອົງການຄຸ້ມຄອງທີ່ດິນ**

ອົງການຄຸ້ມຄອງທີ່ດິນ ມີສິດ ແລະ ໜ້າທີ່ລວມ ດັ່ງນີ້ :

1. ຄົ້ນຄວ້າຮ່າງນະໂຍບາຍ, ກົດໝາຍ, ລັດຖະບັນຍັດ, ດຳລັດ, ຂໍ້ກຳນົດ ແລະ ລະບຽບຫຼັກການ ກ່ຽວກັບການຄຸ້ມຄອງທີ່ດິນ;
2. ສຳຫຼວດວັດແທກ, ຈັດສັນ ແລະສ້າງແຜນທີ່ນຳໃຊ້ທີ່ດິນ ລະດັບທ້ອງຖິ່ນ, ເຂດແຄວ້ນ ແລະ ແຫ່ງຊາດ;
3. ປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນ ເພື່ອວາງແຜນນຳໃຊ້, ປົກປັກຮັກສາ, ພັດທະນາທີ່ດິນ, ຈັດປະເພດທີ່ດິນ, ປະເມີນຄຸນນະພາບທີ່ດິນ, ກຳນົດເຂດທີ່ດິນ ແລະ ກວດກາການນຳໃຊ້ທີ່ດິນ;
4. ມອບສິດນຳໃຊ້ທີ່ດິນ, ໃຫ້ເຊົ່າ, ໃຫ້ສຳປະທານ ແລະຖອນສິດນຳໃຊ້ທີ່ດິນ;
5. ສ້າງສຳມະໂນທີ່ດິນ, ປະເມີນມູນຄ່າທີ່ດິນ, ຂຶ້ນ ແລະຈົດທະບຽນທີ່ດິນ, ອອກໃບຕາດິນ ແລະເກັບກຳສະຖິຕິທີ່ດິນ;
6. ເກັບຄ່າທຳນຽມທີ່ດິນ;
7. ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບທີ່ດິນ;
8. ຄຸ້ມຄອງທີ່ດິນ ຂອງລັດ ແລະ ປົກປັກຮັກສາສິ່ງແວດລ້ອມ;
9. ວາງນະໂຍບາຍ ເພື່ອຄຸ້ມຄອງການຈັດຕັ້ງ ແລະການເຄື່ອນໄຫວຊື້-ຂາຍສິດນຳໃຊ້ທີ່ດິນ;

10. ສ້າງລະບົບຂໍ້ມູນຂ່າວສານ ກ່ຽວກັບທີ່ດິນ;
11. ວາງນະໂຍບາຍ ແລະລະບຽບຫຼັກການ ເພື່ອຄຸ້ມຄອງຜູ້ປະກອບອາຊີບ ທີ່ພົວພັນກັບທີ່ດິນ ເຊັ່ນ: ນັກສຳຫຼວດວັດແທກ, ນັກປະເມີນລາຄາ, ນາຍໜ້າ ຫຼື ຕົວແທນຜູ້ຊື້-ຂາຍສິດນຳໃຊ້ທີ່ດິນ;
12. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 11. (ໃໝ່) ການຈັດແບ່ງເຂດ ແລະ ປະເພດທີ່ດິນ**

ທີ່ດິນ ໃນຂອບເຂດທົ່ວປະເທດ ໄດ້ຈັດແບ່ງເປັນເຂດ ແລະປະເພດ ດັ່ງຕໍ່ໄປນີ້ :

1. ການຈັດແບ່ງເຂດ :

   ເຂດທົ່ງພຽງ, ພູພຽງ ແລະພູດອຍ ຊຶ່ງປະກອບດ້ວຍ :
   - ເຂດຕົວເມືອງ;
   - ເຂດຊົນນະບົດ;
   - ເຂດເສດຖະກິດສະເພາະ;
   - ເຂດເສດຖະກິດພິເສດ.
2. ການຈັດແບ່ງປະເພດ :
   - ທີ່ດິນກະສິກຳ;
   - ທີ່ດິນປ່າໄມ້;
   - ທີ່ດິນບໍລິເວນນ້ຳ;
   - ທີ່ດິນອຸດສາຫະກຳ;
   - ທີ່ດິນຄົມມະນາຄົມ;
   - ທີ່ດິນວັດທະນະທຳ;
   - ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
   - ທີ່ດິນປຸກສ້າງ.

**ມາດຕາ 12. (ໃໝ່) ການກຳນົດຂອບເຂດທີ່ດິນ ແຕ່ລະປະເພດ**

ລັດຖະບານ ເປັນຜູ້ຈັດສັນ ແລະຈັດແບ່ງຂອບເຂດທີ່ດິນ ແຕ່ລະປະເພດໃນຂອບເຂດທົ່ວ ປະເທດ ແລ້ວນຳສະເໜີຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ.

ອົງການປົກຄອງທ້ອງຖິ່ນ ເປັນຜູ້ກຳນົດຂອບເຂດທີ່ດິນປະເພດຕ່າງໆ ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບການກຳນົດຂອບເຂດ ປະເພດທີ່ດິນ ທີ່ລັດໄດ້ກຳນົດອອກ ແລ້ວນຳສະເໜີໃຫ້ອົງການປົກຄອງຂັ້ນເທິງຖັດຕົນນັ້ນ ເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 13. (ໃໝ່) ການເຊົ່າທີ່ດິນ**

ລັດອະນຸຍາດໃຫ້ພົນລະເມືອງລາວ ເຊົ່າທີ່ດິນຂອງລັດສູງສຸດບໍ່ໃຫ້ເກີນ ສາມສິບປີ ແລະສາມາດ ຕໍ່ໄດ້ ແລ້ວແຕ່ລະກໍລະນີ.

ການກຳນົດເວລາເຊົ່າທີ່ດິນຕົວຈິງ ໃຫ້ອີງໃສ່ລັກສະນະ ແລະ ຂະໜາດຂອງກິດຈະການທີ່ຈະນຳໃຊ້ທີ່ດິນນັ້ນ.

ສຳລັບການເຊົ່າ ສິດນຳໃຊ້ທີ່ດິນ ທີ່ມີການພັດທະນາແລ້ວ ລະຫວ່າງ ພົນລະເມືອງລາວດ້ວຍກັນ  ແມ່ນຂຶ້ນກັບການຕົກລົງ ຂອງສອງຝ່າຍ ແລະຕ້ອງໄດ້ຮັບການຢັ້ງຢືນຈາກ ອົງການປົກຄອງບ້ານ, ສຳນັກງານທະບຽນສານ ແລະ ຈົດທະບຽນຢູ່ອົງການປົກຄອງເມືອງ, ເທດສະບານ ບ່ອນທີ່ດິນຕັ້ງຢູ່.

### ມາດຕາ 14. ການຫັນປ່ຽນປະເພດທີ່ດິນ

ການຫັນປ່ຽນທີ່ດິນປະເພດໜຶ່ງ ໄປສູ່ທີ່ດິນອີກປະເພດໜຶ່ງ ຈະດຳເນີນໄດ້ກໍຕໍ່ເມື່ອຫາກເຫັນວ່າ ມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ  ໂດຍບໍ່ໃຫ້ມີຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ ແລະ ຕ້ອງໄດ້ຮັບອະນຸມັດ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງເສຍກ່ອນ.

## ໝວດທີ 2
## ການຄຸ້ມຄອງທີ່ດິນກະສິກຳ

### ມາດຕາ 15. ທີ່ດິນກະສິກຳ

ທີ່ດິນກະສິກຳ ແມ່ນທີ່ດິນທີ່ໄດ້ກຳນົດໄວ້ ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະການຄົ້ນຄວ້າທົດລອງດ້ານກະສິກຳ ລວມທັງທີ່ດິນ ຊົນລະປະທານ.

### ມາດຕາ 16. ການຄຸ້ມຄອງທີ່ດິນກະສິກຳ

ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງທີ່ດິນກະສິກຳ, ກຳນົດທີ່ດິນກະສິກຳປະເພດຕ່າງໆ, ຄົ້ນຄວ້າວາງລະບຽບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

### ມາດຕາ 17. (ໃໝ່) ການກຳນົດຂອບເຂດ ສິດນຳໃຊ້ທີ່ດິນກະສິກຳ

ລັດອະນຸຍາດໃຫ້ ບຸກຄົນ ແລະ ຄອບຄົວ ນຳໃຊ້ທີ່ດິນກະສິກຳ ຢ່າງຖືກຕ້ອງຕາມແຜນຈັດສັນ, ຕາມເປົ້າໝາຍ, ຍາວນານ ແລະ ມີປະສິດທິຜົນ ຕາມຈຳນວນເນື້ອທີ່ ດັ່ງນີ້ :

- ຜູ້ທີ່ປູກເຂົ້າ, ລ້ຽງສັດ ໃນຈຳນວນສູງສຸດ ບໍ່ເກີນໜຶ່ງເຮັກຕາ ຕໍ່ໜຶ່ງແຮງງານ ໃນຄອບຄົວ;
- ຜູ້ທີ່ເຮັດສວນປູກພືດອຸດສາຫະກຳ ແລະ ພືດລົ້ມລຸກ ໃນຈຳນວນສູງສຸດ ບໍ່ເກີນສາມເຮັກຕາ ຕໍ່ໜຶ່ງແຮງງານ ໃນຄອບຄົວ;
- ຜູ້ທີ່ເຮັດສວນປູກຕົ້ນໄມ້ໃຫ້ໝາກ ໃນຈຳນວນສູງສຸດ ບໍ່ເກີນສາມເຮັກຕາ ຕໍ່ໜຶ່ງແຮງງານ ໃນຄອບຄົວ;

– ຜູ້ທີ່ນໍາໃຊ້ທີ່ດິນປອກໂລ້ນ ຫຼື ປ່າຫຍ້າປະເພດຕ່າງໆ ຊຶ່ງທັນມາປູກພືດພັນຫຍ້າລ້ຽງສັດ ໃນຈໍານວນສູງສຸດ ບໍ່ເກີນສິບຫ້າເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ.

ໃນການອະນຸມັດ ເນື້ອທີ່ດິນກະສິກໍາ ໃຫ້ບຸກຄົນນໍາໃຊ້ນັ້ນ ລັດຈະພິຈາລະນາເປັນແຕ່ລະກໍລະນີ ໂດຍອີງໃສ່ລັກສະນະ, ຂະໜາດ, ຄວາມສາມາດຕົວຈິງໃນການຜະລິດ, ເງື່ອນໄຂ ແລະ ແຜນຈັດສັນ ທີ່ດິນກະສິກໍາ ຂອງທ້ອງຖິ່ນ.

ແຮງງານໜຶ່ງສາມາດ ໄດ້ຮັບສິດນໍາໃຊ້ທີ່ດິນກະສິກໍາຫຼາຍປະເພດ ຖ້າຜູ້ກ່ຽວຫາກມີເງື່ອນໄຂ ແລະ ຄວາມສາມາດຕົວຈິງ ໃນການຜະລິດ.

ຖ້າຜູ້ໃດ ຫາກຕ້ອງການນໍາໃຊ້ທີ່ດິນກະສິກໍາ ຫຼາຍກວ່າອັດຕາຂອງປະເພດທີ່ດິນ ທີ່ຕົນໄດ້ຮັບສິດນໍາໃຊ້ ກໍສາມາດສະເໜີເຊົ່າ ຫຼື ສໍາປະທານ ນໍາລັດໄດ້.

ສໍາລັບການອະນຸມັດເນື້ອທີ່ດິນກະສິກໍາ ໃຫ້ການຈັດຕັ້ງທໍາການຜະລິດນັ້ນ ແມ່ນອີງໃສ່ຄວາມສາມາດຕົວຈິງ ຂອງການຈັດຕັ້ງດັ່ງກ່າວ.

**ມາດຕາ 18. (ໃໝ່) ການມອບສິດນໍາໃຊ້ທີ່ດິນກະສິກໍາ**

ອົງການປົກຄອງເມືອງ, ເທດສະບານ ເປັນຜູ້ພິຈາລະນາຕົກລົງມອບສິດນໍາໃຊ້ທີ່ດິນກະສິກໍາ ທີ່ຢູ່ໃນການຄຸ້ມຄອງຂອງຕົນໃຫ້ບຸກຄົນ ແລະການຈັດຕັ້ງນໍາໃຊ້ ໂດຍອອກໃບຢັ້ງຢືນທີ່ດິນໃຫ້. ໃບຢັ້ງຢືນທີ່ດິນນີ້ ມີອາຍຸສາມປີ, ຖ້າວ່າພາຍໃນກໍານົດດັ່ງກ່າວ ຫາກນໍາໃຊ້ທີ່ດິນຖືກຕ້ອງຕາມເປົ້າໝາຍ, ຕາມລະບຽບການ ແລະ ບໍ່ມີການຕໍ່ວ່າຕໍ່ຂານ, ທັກທ້ວງ ຫຼື ການຕໍ່ວ່າຕໍ່ຂານນັ້ນຫາກຖືກແກ້ໄຂໄປແລ້ວ ຈຶ່ງຈະມີສິດສະເໜີນໍາອົງການຄຸ້ມຄອງທີ່ດິນ ປະຈໍາແຂວງ, ນະຄອນເພື່ອຂໍໃບຕາດິນ ກ່ຽວກັບສິດນໍາໃຊ້ຢ່າງຍາວນານ.

## ໝວດທີ 3
## ການຄຸ້ມຄອງທີ່ດິນປ່າໄມ້

**ມາດຕາ 19. ທີ່ດິນປ່າໄມ້**

ທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ປົກຄຸມຢູ່ ຫຼື ທີ່ດິນບໍ່ມີປ່າໄມ້ປົກຄຸມ ຊຶ່ງລັດ ໄດ້ກໍານົດໃຫ້ເປັນທີ່ດິນປ່າໄມ້ ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍປ່າໄມ້.

**ມາດຕາ 20. ການຄຸ້ມຄອງທີ່ດິນປ່າໄມ້**

ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງທີ່ດິນປ່າໄມ້, ກໍານົດທີ່ດິນປ່າໄມ້ປະເພດຕ່າງໆ, ຄົ້ນຄວ້າວາງລະບຽບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນໍາໃຊ້ທີ່ດິນປະເພດດັ່ງກ່າວ ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລ້ວນໍາສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບ ຮອງເອົາ.

### ມາດຕາ 21. (ໃໝ່) ການກຳນົດຂອບເຂດ ສິດນຳໃຊ້ທີ່ດິນປ່າໄມ້

ລັດອະນຸຍາດໃຫ້ບຸກຄົນ ແລະ ຄອບຄົວ ນຳໃຊ້ທີ່ດິນປ່າໄມ້ ທີ່ເປັນທີ່ດິນປອກໂລ້ນ ຫຼື ປ່າຊຸດໂຊມ ຢ່າງຖືກຕ້ອງຕາມເປົ້າໝາຍ, ຍາວນານ ແລະ ມີປະສິດທິຜົນ ໃນຈຳນວນບໍ່ເກີນ ສາມເຮັກຕາ ຕໍ່ໜຶ່ງແຮງງານ ໃນຄອບຄົວ. ຖ້າຜູ້ໃດຫາກຕ້ອງການ ນຳໃຊ້ທີ່ດິນປ່າໄມ້ຫຼາຍກວ່ານັ້ນ ກໍມີສິດສະເໜີ ຂໍເຊົ່າ ຫຼື ສຳປະທານ ນຳລັດ.

ສຳລັບການອະນຸມັດເນື້ອທີ່ດິນປ່າໄມ້ ໃຫ້ການຈັດຕັ້ງນຳໃຊ້ ແມ່ນອີງໃສ່ຄວາມສາມາດຕົວຈິງ ໃນການຜະລິດ.

### ມາດຕາ 22. (ໃໝ່) ການມອບສິດນຳໃຊ້ທີ່ດິນປ່າໄມ້

ອົງການປົກຄອງເມືອງ, ເທດສະບານ ສົມທົບກັບອົງການປົກຄອງບ້ານ ເປັນຜູ້ພິຈາລະນາຕົກລົງ ມອບສິດນຳໃຊ້ທີ່ດິນປ່າໄມ້ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ໃຫ້ບຸກຄົນ ແລະການຈັດຕັ້ງນຳໃຊ້ ໂດຍອອກໃບຢັ້ງຢືນໃຫ້. ໃບຢັ້ງຢືນທີ່ດິນນີ້ ມີອາຍຸສາມປີ, ຖ້າວ່າພາຍໃນກຳນົດດັ່ງກ່າວ ຫາກນຳໃຊ້ຖືກຕ້ອງຕາມ ເປົ້າໝາຍ, ຕາມລະບຽບການ ແລະ ບໍ່ມີຜູ້ຕໍ່ວ່າຕໍ່ຂານ, ທັກທ້ວງ ຫຼື ການຕໍ່ວ່າຕໍ່ຂານນັ້ນ ຫາກຖືກແກ້ໄຂໄປແລ້ວ ຈຶ່ງມີສິດນຳໄປສະເໜີຂໍໃບຕາດິນ ກ່ຽວກັບສິດນຳໃຊ້ຢ່າງຍາວນານໄດ້ ນຳອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ.

## ໝວດທີ 4
## ການຄຸ້ມຄອງທີ່ດິນບໍລິເວນນ້ຳ

### ມາດຕາ 23. ທີ່ດິນບໍລິເວນນ້ຳ

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນຊຶ່ງຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳ: ທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳປົກປະ ຫຼື ທີ່ດິນທີ່ເກີດຂຶ້ນຈາກການດັດແປງ ຫຼື ອວ່າຍແລວນ້ຳ.

### ມາດຕາ 24. (ໃໝ່) ການຄຸ້ມຄອງທີ່ດິນບໍລິເວນນ້ຳ

ກະຊວງ ກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງທີ່ດິນບໍລິເວນນ້ຳ, ຄົ້ນຄວ້າວາງລະບຽບການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະການນຳໃຊ້ທີ່ດິນປະເພດດັ່ງກ່າວ ໂດຍປະສານສົມທົບ ກັບອົງການປົກຄອງທ້ອງຖິ່ນ ບ່ອນທີ່ດິນບໍລິເວນນ້ຳຕັ້ງຢູ່ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

### ມາດຕາ 25. ລະບຽບການນຳໃຊ້ທີ່ດິນບໍລິເວນນ້ຳ

ການນຳໃຊ້ທີ່ດິນບໍລິເວນນ້ຳ ຕ້ອງຮັບປະກັນເງື່ອນໄຂ ດັ່ງຕໍ່ໄປນີ້:

1. ບໍ່ໃຫ້ມີການເຊາະເຈື່ອນ;
2. ບໍ່ໃຫ້ສະກັດກັ້ນທາງນ້ຳໄຫຼ;

3. ບໍ່ໃຫ້ນ້ຳຕື້ນເຂີນ ຫຼື ອັ່ງຖ້ວມ;
4. ບໍ່ໃຫ້ສ້າງຄວາມເປິະເປື້ອນ ເປັນພິດແກ່ແຫຼ່ງນ້ຳ;
5. ບໍ່ໃຫ້ຕັດຕົ້ນໄມ້ທຳລາຍປ່າເຂດແຫຼ່ງນ້ຳ;
6. ບໍ່ໃຫ້ຂຸດລອກເອົາດິນບວມ, ດິນທາມ, ຖ້າຫາກມີຄວາມຈຳເປັນນັ້ນ ຕ້ອງໄດ້ຮັບອະນຸຍາດຈາກອົງການ ທີ່ກ່ຽວຂ້ອງເສັຍກ່ອນ.

**ມາດຕາ 26. (ໃໝ່) ການນຳໃຊ້ທີ່ດິນບໍລິເວນນ້ຳ**

ອົງການປົກຄອງບ້ານ ບ່ອນທີ່ດິນບໍລິເວນນ້ຳຕັ້ງຢູ່ ເປັນຜູ້ຄົ້ນຄວ້ານຳສະເໜີ ຕໍ່ອົງການປົກຄອງເມືອງ, ເທດສະບານ ກ່ຽວກັບການມອບທີ່ດິນດັ່ງກ່າວ ໃຫ້ບຸກຄົນ ຫຼື ການຈັດຕັ້ງປົກປັກຮັກສາ ແລະນຳ ໃຊ້ ຕາມຄວາມເໝາະສົມ.

ໃນກໍລະນີ ທີ່ດິນບໍລິເວນນ້ຳ ຫາກໄດ້ເກີດຂຶ້ນຢູ່ໃນຂອບເຂດສິດນຳໃຊ້ ຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງແລ້ວ ຖ້າຫາກອົງການທີ່ຄຸ້ມຄອງນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ແລະ ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ກວດກາເຫັນວ່າ ການນຳໃຊ້ທີ່ດິນດັ່ງກ່າວ ບໍ່ມີຜົນກະທົບອັນບໍ່ດີ ຕໍ່ບໍລິເວນນ້ຳນັ້ນແລ້ວ ທີ່ດິນດັ່ງກ່າວກໍຈະຕົກຢູ່ໃນສິດນຳໃຊ້ ຂອງບຸກຄົນ ຫຼື ການຈັດຕັ້ງນັ້ນຕໍ່ໄປ.

## ໝວດທີ 5
## ການຄຸ້ມຄອງທີ່ດິນອຸດສາຫະກຳ

**ມາດຕາ 27. (ໃໝ່) ທີ່ດິນອຸດສາຫະກຳ**

ທີ່ດິນອຸດສາຫະກຳ ແມ່ນຂອບເຂດ ຫຼື ບໍລິເວນທີ່ດິນ ຊຶ່ງລັດກຳນົດໃຫ້ເປັນທີ່ຕັ້ງໂຮງຈັກ, ໂຮງງານ, ລວມທັງສະຖານທີ່ພັກເຊົາ ຂອງກຳມະກອນ, ພື້ນທີ່ອຸດສາຫະກຳ, ເຂດອຸດສາຫະກຳ, ນິຄົມອຸດສາຫະກຳ, ສະຖາບັນ ຫຼື ສູນຄົ້ນຄວ້າທົດລອງອຸດສາຫະກຳ ທາງດ້ານເຕັກນິກວິທະຍາສາດ, ສະຖານທີ່ບຳບັດນ້ຳເສັຍຄຸນ, ບ່ອນທຳລາຍສິ່ງເສດເຫຼືອອຸດສາຫະກຳ, ແຫຼ່ງວັດຖຸພະລັງງານ, ແລວທາງສາຍສົ່ງໄຟຟ້າ, ແລວທາງທໍ່ພະລັງງານ ແລະ ອາຍແກັດ, ທໍ່ນ້ຳປະປາ, ເຂດບໍ່ແຮ່ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າ ໃນເປົ້າໝາຍອຸດສາຫະກຳ.

**ມາດຕາ 28. ການຄຸ້ມຄອງທີ່ດິນອຸດສາຫະກຳ**

ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ ເປັນຜູ້ຄຸ້ມຄອງທີ່ດິນອຸດສາຫະກຳ, ຄົ້ນຄວ້າວາງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລ້ວສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.

ສຳລັບການຄຸ້ມຄອງທີ່ດິນແລວທາງສາຍສົ່ງໄຟຟ້າ, ແລວທາງທໍ່ພະລັງງານ ແລະ ອາຍແກັດ, ທໍ່ນໍ້າປະປານັ້ນ ໃຫ້ປະສານສົມທົບກັບຂະແໜງການຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ.

### ມາດຕາ 29. ລະບຽບການນຳໃຊ້ທີ່ດິນອຸດສາຫະກຳ

ບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ທີ່ດິນອຸດສາຫະກຳ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງຕໍ່ໄປນີ້:

1. ໄດ້ຮັບອະນຸຍາດ ຈາກຂະແໜງການອຸດສາຫະກຳ ແລະ ຫັດຖະກຳ;
2. ໄດ້ຮັບອະນຸຍາດ ຈາກອົງການຜັງເມືອງ;
3. ບໍ່ກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ອື່ນ, ແກ່ສາທາລະນະ ຫຼື ສິ່ງແວດລ້ອມ;
4. ປົວແປງສະພາບໜ້າດິນ ແລະ ຟື້ນຟູທີ່ດິນ ໃຫ້ຄືນສູ່ສະພາບເດີມ ພາຍຫຼັງທີ່ໄດ້ເຊົາໃຊ້ແລ້ວ ສຳລັບທີ່ດິນບໍ່ແຮ່.

## ໝວດທີ 6
## ການຄຸ້ມຄອງທີ່ດິນຄົມມະນາຄົມ

### ມາດຕາ 30. ທີ່ດິນຄົມມະນາຄົມ

ທີ່ດິນຄົມມະນາຄົມ ແມ່ນທີ່ດິນສຳລັບໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນໍ້າ, ເຂດສະຫງວນແລວທາງ, ສະຖານທີ່ຕັ້ງຂົວ, ແລວສາຍໂທລະສັບ, ທີ່ຕັ້ງສະຖານີສື່ສານ ລວມທັງສະໜາມບິນ, ທ່າເຮືອ, ສະຖານີລົດຂົນສົ່ງ ສິນຄ້າ ແລະລົດໂດຍສານ, ອຸໂມງ, ທາງລົດໄຟ, ສະຖານທີ່ຕັ້ງສາງຮັບໃຊ້ການຂົນສົ່ງ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານ ຄົມມະນາຄົມຂົນສົ່ງ.

### ມາດຕາ 31. ການຄຸ້ມຄອງທີ່ດິນຄົມມະນາຄົມ

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ຄຸ້ມຄອງທີ່ດິນຄົມມະນາຄົມ, ຄົ້ນຄວ້າວາງລະບຽບການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການໃຊ້ທີ່ດິນ ປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

### ມາດຕາ 32. ການໃຊ້ທີ່ດິນຄົມມະນາຄົມ

ການໃຊ້ທີ່ດິນຄົມມະນາຄົມ ຕ້ອງປະຕິບັດຢ່າງຖືກຕ້ອງ ຕາມລະບຽບການສະເພາະ ຊຶ່ງອົງການທີ່ກ່ຽວຂ້ອງວາງອອກ.

## ໝວດທີ 7
## ການຄຸ້ມຄອງທີ່ດິນວັດທະນະທຳ

**ມາດຕາ 33. ທີ່ດິນວັດທະນະທຳ**

ທີ່ດິນວັດທະນະທຳ ແມ່ນສະຖານທີ່ຕັ້ງ ຂອງມໍລະດົກທາງດ້ານວັດທະນະທຳ ທີ່ຕິດພັນກັບຮ່ອງຮອຍປະຫວັດສາດ, ວັດຖຸບູຮານ, ປູຊະນີຍະສະຖານ, ວັດວາອາຮາມ, ທິວທັດທຳມະຊາດ, ສິ່ງປຸກສ້າງ ທາງດ້ານວັດທະນະທຳ ແລະ ສະຖານທີ່ອື່ນໆ ທີ່ລັດກຳນົດໃຫ້ເປັນທີ່ດິນວັດທະນະທຳ ແລະ ການທ່ອງ ທ່ຽວ.

**ມາດຕາ 34. ການຄຸ້ມຄອງທີ່ດິນວັດທະນະທຳ**

ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ເປັນຜູ້ຄຸ້ມຄອງທີ່ດິນວັດທະນະທຳ ໃນຂອບເຂດທົ່ວປະເທດ, ຄົ້ນຄວ້າວາງລະບຽບການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການໃຊ້ທີ່ດິນປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ໃຊ້ທີ່ດິນວັດທະນະທຳນັ້ນ ຕ້ອງປະຕິບັດຕາມລະບຽບການກ່ຽວກັບການຄຸ້ມຄອງ, ການໃຊ້ ແລະ ການປົກປັກຮັກສາທີ່ດິນວັດທະນະທຳ.

## ໝວດທີ 8
## ການຄຸ້ມຄອງທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ

**ມາດຕາ 35. ທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ**

ທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແມ່ນທີ່ດິນທີ່ໃຊ້ເຂົ້າໃນວຽກງານ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ: ບ່ອນຕັ້ງຄ້າຍ, ສຳນັກງານ, ກົມກອງ, ບ່ອນພັກເຊົາ, ໂຮງຮຽນ ແລະ ສະໜາມຝຶກແອບວິຊາການທະຫານ, ຕຳຫຼວດ, ສະໜາມປືນໃຫຍ່, ສະໜາມບິນ, ທ່າເຮືອ , ສາງ, ໂຮງໝໍ, ໂຮງຈັກ, ໂຮງງານ, ສະຖານທີ່ພັກຜ່ອນຂອງທະຫານ, ຕຳຫຼວດ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

**ມາດຕາ 36. (ໃໝ່) ການຄຸ້ມຄອງທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ**

ກະຊວງ ປ້ອງກັນປະເທດ ແລະ ກະຊວງ ປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຄົ້ນຄວ້າວາງລະບຽບການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການໃຊ້ທີ່ດິນປະເພດດັ່ງກ່າວ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 37. ການໃຊ້ທີ່ດິນປະເພດອື່ນ ເຂົ້າໃນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ**

ເມື່ອມີຄວາມຈຳເປັນ ກົມກອງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ສາມາດໃຊ້ທີ່ດິນປະເພດອື່ນ ບໍ່ວ່າຂອງບຸກຄົນ ຫຼື ການຈັດຕັ້ງ ເຂົ້າໃນການເຄື່ອນໄຫວວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕາມການຕົກລົງ ຂອງລັດຖະບານ.

ພາຍຫຼັງໝົດຄວາມຈຳເປັນ ໃນການໃຊ້ແລ້ວ ຕ້ອງສົ່ງທີ່ດິນດັ່ງກ່າວນັ້ນຄືນ ໃຫ້ແກ່ເຈົ້າຂອງເດີມ. ໃນກໍລະນີທີ່ການໃຊ້ນັ້ນ ຫາກໄດ້ກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ໄດ້ຮັບສິດນຳໃຊ້ທີ່ດິນ ທີ່ມີການພັດທະນາແລ້ວ ກໍຄວນພິຈາລະນາ ທົດແທນຄ່າເສັຍຫາຍ ຕາມຄວາມເໝາະສົມ.

## ໝວດທີ 9
## ການຄຸ້ມຄອງທີ່ດິນປຸກສ້າງ

**ມາດຕາ 38. ທີ່ດິນປຸກສ້າງ**

ທີ່ດິນປຸກສ້າງ ແມ່ນທີ່ດິນທີ່ໄດ້ກຳນົດໄວ້ ເພື່ອນຳໃຊ້ໃນການປຸກສ້າງທີ່ຢູ່ອາໄສ, ໂຮງຈັກ, ໂຮງ ງານ, ສຳນັກງານ, ອົງການ, ສະຖານທີ່ສາທາລະນະ.

**ມາດຕາ 39. (ໃໝ່) ການຄຸ້ມຄອງທີ່ດິນປຸກສ້າງ**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເປັນຜູ້ຄຸ້ມຄອງທີ່ດິນປຸກສ້າງ, ຄົ້ນຄວ້າວາງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 40. ປະເພດທີ່ດິນປຸກສ້າງ**

ທີ່ດິນປຸກສ້າງ ແບ່ງອອກເປັນປະເພດ ດັ່ງນີ້ :

- ທີ່ດິນປຸກສ້າງ ເພື່ອສາທາລະນະປະໂຫຍດ;
- ທີ່ດິນປຸກສ້າງທີ່ຢູ່ອາໄສ;
- ທີ່ດິນປຸກສ້າງໂຮງຈັກ ໂຮງງານ;
- ທີ່ດິນປຸກສ້າງສຳນັກງານ, ອົງການ.

ທີ່ດິນປຸກສ້າງ ເພື່ອສາທາລະນະປະໂຫຍດ ແມ່ນທີ່ດິນ ເພື່ອຮັບໃຊ້ຜົນປະໂຫຍດສ່ວນລວມ: ສວນສາທາລະນະ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ສະໜາມເດັກຫຼິ້ນ, ສະໜາມກິລາ ແລະ ອື່ນໆ ທີ່ຮັບ ໃຊ້ສາທາລະນະປະໂຫຍດ.

ທີ່ດິນປຸກສ້າງທີ່ຢູ່ອາໄສ ແມ່ນທີ່ດິນທີ່ນຳໃຊ້ເຂົ້າໃນການປຸກສ້າງທີ່ພັກພາອາໄສ ຂອງບຸກຄົນ ແລະ ຄອບຄົວ.

ທີ່ດິນປຸກສ້າງໂຮງຈັກໂຮງງານ ແມ່ນທີ່ດິນນຳໃຊ້ ເພື່ອດຳເນີນການຜະລິດ ແລະ ການປຸງແຕ່ງອຸດສາຫະກຳ.

ທີ່ດິນປຸກສ້າງສຳນັກງານ, ອົງການ ແມ່ນທີ່ດິນ ເພື່ອຮັບໃຊ້ການປຸກສ້າງສຳນັກງານ, ອົງການຂອງລັດ, ຂອງວິສາຫະກິດ, ສະຖານທູດ ຫຼື ອົງການຈັດຕັ້ງສາກົນ.

ການຈັດສັນທີ່ດິນປຸກສ້າງ ຕ້ອງປະຕິບັດຕາມຜັງເມືອງ ແລະຕາມອັດຕາສ່ວນຂອງທີ່ດິນປຸກ ສ້າງ ແຕ່ລະປະເພດ ທີ່ໄດ້ກຳນົດໄວ້.

**ມາດຕາ 41. ລະບຽບການນຳໃຊ້ທີ່ດິນປຸກສ້າງ**

ລັດຕ້ອງສະຫງວນທີ່ດິນປຸກສ້າງ ສຳລັບສາທາລະນະປະໂຫຍດໄວ້ ເພື່ອຮັບໃຊ້ຜົນປະໂຫຍດສ່ວນລວມ. ຖ້າຫາກມີການປ່ຽນເປົ້າໝາຍ ການໃຊ້ທີ່ດິນດັ່ງກ່າວ ກໍຕ້ອງໃຫ້ຮັບໃຊ້ຜົນປະໂຫຍດສ່ວນລວມເຊັ່ນດຽວກັນ ແລະ ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການທີ່ກ່ຽວຂ້ອງເສັຍກ່ອນ.

ການນຳໃຊ້ທີ່ດິນປຸກສ້າງ ແມ່ນບໍ່ໃຫ້ແຕະຕ້ອງເຖິງ ສິດຜົນປະໂຫຍດຂອງຜູ້ອື່ນ ທັງຮັບປະກັນສະພາວະຄວາມເປັນຈິງຕ້ອງຍອມຮັບ. ການປຸກສ້າງຕ່າງໆ ຕ້ອງໄດ້ຮັບອະນຸຍາດຈາກອົງການຜັງເມືອງ, ຕ້ອງປະຕິບັດຕາມລະບຽບຜັງເມືອງຢ່າງເຂັ້ມງວດ ແລະຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງ, ຮັບປະກັນມາດຕະຖານເຕັກນິກ ຢ່າງຄົບຖ້ວນພ້ອມທັງຮັບປະກັນການ ປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 42. ການກຳນົດຂອບເຂດ ສິດນຳໃຊ້ທີ່ດິນປຸກສ້າງ**

ລັດອະນຸຍາດໃຫ້ ບຸກຄົນ ແລະ ຄອບຄົວນຳໃຊ້ທີ່ດິນປຸກສ້າງ ຢ່າງຖືກຕ້ອງຕາມເປົ້າໝາຍ, ມີປະສິດທິຜົນ, ມີຄວາມສະຫງົບ ແລະ ຍາວນານ ໃນເນື້ອທີ່ບໍ່ເກີນ ແປດຮ້ອຍຕາແມັດຕໍ່ຄົນໃນຄອບຄົວ.

ສຳລັບການອະນຸມັດ ເນື້ອທີ່ດິນປຸກສ້າງ ໃຫ້ການຈັດຕັ້ງນຳໃຊ້ ແມ່ນອີງຕາມຄວາມສາມາດຕົວຈິງໃນການນຳໃຊ້.

## ໝວດທີ 10
## ການຂຶ້ນທະບຽນທີ່ດິນ

**ມາດຕາ 43. (ໃໝ່) ການຂຶ້ນທະບຽນທີ່ດິນ**

ການຂຶ້ນທະບຽນທີ່ດິນ ແມ່ນການຢັ້ງຢືນສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງ ເພື່ອບໍ່ໃຫ້ມີການປອມແປງສິດນຳໃຊ້ທີ່ດິນ, ອຳນວຍຄວາມສະດວກໃຫ້ແກ່ການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນ ຢ່າງເປັນເອກະພາບ ໃນທົ່ວປະເທດ.

ໃນການຂຶ້ນທະບຽນທີ່ດິນ ຕ້ອງຈົດກ່າຍຂໍ້ມູນຕ່າງໆເຂົ້າປຶ້ມທະບຽນທີ່ດິນ: ຊື່ ແລະນາມສະກຸນ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ, ( ຊື່ ແລະ ນາມສະກຸນ ຂອງຜົວ ແລະ ເມັຍ ໃນກໍລະນີເປັນສິນສົມສ້າງ), ປະເພດທີ່ດິນ, ຂອບເຂດ ແລະ ເນື້ອທີ່ຂອງທີ່ດິນ, ການໄດ້ມາ ແລະ ທີ່ຕັ້ງຂອງທີ່ດິນ.

### ມາດຕາ 44. ຮູບການຂຶ້ນທະບຽນທີ່ດິນ

ການຂຶ້ນທະບຽນທີ່ດິນມີ ສອງຮູບການຄື :

- ການຂຶ້ນທະບຽນທີ່ດິນ ຢ່າງເປັນລະບົບ;
- ການຂຶ້ນທະບຽນທີ່ດິນ ຕາມຄໍາຮ້ອງຂໍ.

ການຂຶ້ນທະບຽນຢ່າງເປັນລະບົບ ແມ່ນການຂຶ້ນທະບຽນ ໂດຍບໍ່ມີຄໍາຮ້ອງຂໍ, ເຮັດເປັນລະບົບໃນເຂດໃດເຂດໜຶ່ງ ທີ່ມີຄວາມຈໍາເປັນໃນການຈັດສັນທີ່ດິນ, ຈັດແບ່ງເຂດ, ແບ່ງປະເພດທີ່ດິນເພື່ອຄຸ້ມຄອງ.

ການຂຶ້ນທະບຽນທີ່ດິນຕາມຄໍາຮ້ອງຂໍ ແມ່ນການຂຶ້ນທະບຽນ ທີ່ດໍາເນີນຕາມຄໍາຮ້ອງຂໍຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເພື່ອໃຫ້ມີການຢັ້ງຢືນ ກ່ຽວກັບສິດນໍາໃຊ້ທີ່ດິນ ຂອງຕົນ.

### ມາດຕາ 45. (ໃໝ່) ຄໍາຮ້ອງ ຂໍຂຶ້ນທະບຽນທີ່ດິນ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຢາກຂຶ້ນທະບຽນທີ່ດິນ ຕ້ອງຍື່ນຄໍາຮ້ອງຂໍຂຶ້ນທະບຽນຕໍ່ອົງການຄຸ້ມຄອງທີ່ດິນ ປະຈໍາແຂວງ, ນະຄອນ ໂດຍຜ່ານອົງການປົກຄອງບ້ານ ແລະ ອົງການຄຸ້ມຄອງ ທີ່ດິນ ຂອງເມືອງ, ເທດສະບານ.

ຄໍາຮ້ອງຂໍຂຶ້ນທະບຽນທີ່ດິນ ປະກອບດ້ວຍ :

1. ໃບຢັ້ງຢືນ ກ່ຽວກັບການໄດ້ມາ ຂອງທີ່ດິນ ເຊັ່ນ: ການມອບຂອງລັດ, ການໂອນ ຫຼື ການສືບທອດມູນມໍຣະດົກ;
2. ໃບຢັ້ງຢືນທີ່ດິນ ຖ້າຫາກແມ່ນທີ່ດິນກະສິກໍາ ຫຼື ທີ່ດິນປ່າໄມ້;
3. ໃບຢັ້ງຢືນຮັບປະກັນທີ່ດິນ ຈາກເຈົ້າຂອງເດີມ ຫຼື ອົງການປົກຄອງບ່ອນທີ່ດິນນັ້ນ ຕັ້ງຢູ່;
4. ເອກະສານອື່ນໆ ທີ່ຈໍາເປັນ.

### ມາດຕາ 46. (ໃໝ່) ການກວດກາຄໍາຮ້ອງ ຂໍຂຶ້ນທະບຽນທີ່ດິນ

ເມື່ອສໍານວນຄໍາຮ້ອງ ຂໍຂຶ້ນທະບຽນທີ່ດິນ ມາເຖິງອົງການຄຸ້ມຄອງທີ່ດິນ ຂອງເມືອງ, ເທດສະບານແລ້ວ ຕ້ອງກວດກາຄວາມຖືກຕ້ອງ ຕາມຄວາມເປັນຈິງ ແລະ ລະບຽບກົດໝາຍ ໂດຍສົມທົບກັບ ອົງການປົກຄອງບ້ານ ບ່ອນທີ່ດິນນັ້ນຕັ້ງຢູ່. ພາຍໃນກໍານົດ ສາມສິບວັນ ອົງການຄຸ້ມຄອງທີ່ດິນ ເມືອງ, ເທດສະບານ ຕ້ອງໄດ້ຕອບໃຫ້ເຈົ້າຂອງຄໍາຮ້ອງນັ້ນຊາບ.

ພາຍຫຼັງທີ່ເຫັນວ່າ ຂໍ້ມູນຖືກຕ້ອງຕາມຄວາມເປັນຈິງ ແລະ ລະບຽບກົດໝາຍແລ້ວ ພະນັກງານໜ່ວຍວັດແທກ ກໍຈະທໍາການວັດແທກ ແລະ ເຮັດແຜນທີ່ດິນ ຄັດຕິດສໍານວນຄໍາຮ້ອງເພື່ອນໍາສະເໜີໃຫ້ອົງການຄຸ້ມຄອງທີ່ດິນ ປະຈໍາແຂວງ, ນະຄອນ ພິຈາລະນາຂຶ້ນທະບຽນທີ່ດິນ.

## ມາດຕາ 47. (ໃໝ່) ປຶ້ມທະບຽນທີ່ດິນ

ປຶ້ມທະບຽນທີ່ດິນ ແມ່ນປຶ້ມທີ່ໃຊ້ຈົດກ່າຍ ຕາມເລກລຳດັບການຂຶ້ນທະບຽນທີ່ດິນ ເຂົ້າໃນປຶ້ມທະບຽນທີ່ດິນນັ້ນ ຊຶ່ງມີລາຍເຊັນ ແລະ ຕາປະທັບຂອງຫົວໜ້າ ອົງການຄຸ້ມຄອງທີ່ດິນແຫ່ງຊາດ ຢູ່ໜ້າຕົ້ນ ລວມທັງໝາຍເລກລຳດັບ ແລະ ປະທັບຕາໃສ່ແຕ່ລະໃບ.

ປຶ້ມທະບຽນທີ່ດິນ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້ :

1. ຊື່ ແລະນາມສະກຸນ ຂອງບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບສິດນຳໃຊ້ທີ່ດິນ;
2. ວັນ, ເດືອນ, ປີເກີດ, ສັນຊາດ, ອາຊີບ, ທີ່ຢູ່ປະຈຸບັນ ຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ;
3. ຊື່ພໍ່ ແລະ ແມ່ຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ;
4. ເລກທີຕາດິນ;
5. ເລກໝາຍແຜນທີ່ສະເພາະ;
6. ຂອບເຂດ, ເນື້ອທີ່ ແລະ ປະເພດທີ່ດິນ;
7. ແຜນທີ່ດິນ;
8. ເລກລະຫັດຕາດິນ.

## ມາດຕາ 48. ໃບຢັ້ງຢືນທີ່ດິນ

ໃບຢັ້ງຢືນທີ່ດິນ ແມ່ນເອກະສານທາງການ ທີ່ຢັ້ງຢືນກ່ຽວກັບສິດໃຊ້ ທີ່ດິນກະສິກຳ ຫຼື ທີ່ດິນປ່າໄມ້ຊົ່ວຄາວ ຊຶ່ງອົງການປົກຄອງເມືອງ, ເທດສະບານ ອອກໃຫ້ບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດໃຊ້ທີ່ດິນນັ້ນ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບໃບຢັ້ງຢືນທີ່ດິນ ມີສິດທຳການສືບທອດ ຕາມອາຍຸຂອງໃບຢັ້ງຢືນໄດ້ ແຕ່ບໍ່ມີສິດໂອນ, ບໍ່ມີສິດເອົາໄປເປັນຮຸ້ນ, ບໍ່ມີສິດນຳໄປຄ້ຳປະກັນ ຫຼື ໃຫ້ເຊົ່າ.

## ມາດຕາ 49. (ໃໝ່) ໃບຕາດິນ

ໃບຕາດິນແມ່ນເອກະສານ ທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວ ກ່ຽວກັບສິດນຳໃຊ້ທີ່ດິນຢ່າງຖາວອນ ຊຶ່ງໄດ້ຄັດສຳເນົາຢ່າງຖືກຕ້ອງຈາກປຶ້ມທະບຽນທີ່ດິນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງທີ່ດິນພຽງໃບດຽວ ເພື່ອຖືໄວ້ເປັນຫຼັກຖານຢ່າງຍາວນານ ຈົນກວ່າຈະມີການປ່ຽນແປງໃໝ່ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ.

ກ່ອນຈະອອກໃບຕາດິນ ອົງການທີ່ກ່ຽວຂ້ອງຕ້ອງຕິດປະກາດ ຢູ່ອົງການຄຸ້ມຄອງທີ່ດິນ, ສຳນັກງານປົກຄອງເມືອງ, ເທດສະບານ, ສຳນັກງານປົກຄອງບ້ານ ບ່ອນທີ່ດິນຕັ້ງຢູ່, ອອກແຈ້ງການຜ່ານສື່ມວນຊົນຂອງລັດ, ລົງໜ້າໜັງສືພິມ ແລະ ປະກາດທາງວິທະຍຸກະຈາຍສຽງ ຫຼື ອອກໂທລະພາບ ໂດຍອີງໃສ່ເງື່ອນໄຂຕົວຈິງ ໃນກຳນົດ ເກົ້າສິບວັນ ນັບແຕ່ວັນທີ່ລົງລາຍເຊັນໃສ່ໃບປະກາດເປັນຕົ້ນໄປ ເພື່ອໃຫ້ມວນຊົນຊາບ. ຖ້າວ່າພາຍໃນກຳນົດເວລາດັ່ງກ່າວ ຫາກບໍ່ມີການຕໍ່ວ່າຕໍ່ຂານ ຫຼື ການຕໍ່ວ່າຕໍ່ຂານນັ້ນ ຫາກຖືກແກ້ໄຂໄປແລ້ວ ຈຶ່ງອອກໃບຕາດິນ ໃຫ້ແກ່ຜູ້ໄດ້ຮັບສິດນຳໃຊ້ທີ່ດິນ.

**ມາດຕາ 50. (ໃໝ່) ການອອກໃບສຳເນົາຕາດິນ**

ໃນກໍລະນີທີ່ໃບຕາດິນ ຫາກຕົກເຮ່ຍເສຍຫາຍ ຫຼື ຖືກທຳລາຍ ແຕ່ໄດ້ປະຮ່ອງຮອຍທີ່ເປັນຫຼັກຖານຢັ້ງຢືນໃບຕາດິນ ທີ່ກ່ຽວຂ້ອງແລ້ວ ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ຈະອອກໃບສຳເນົາຕາດິນ ໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮ້ອງຂໍ.

ຖ້າວ່າໃບຕາດິນທີ່ຕົກເຮ່ຍເສຍຫາຍ ຫຼື ຖືກທຳລາຍນັ້ນ ຫາກບໍ່ປະຮ່ອງຮອຍໃດໜຶ່ງ ທີ່ເປັນຫຼັກຖານຢັ້ງຢືນໃບຕາດິນ ທີ່ກ່ຽວຂ້ອງແລ້ວ ກ່ອນຈະອອກໃບສຳເນົາຕາດິນນັ້ນ ຕ້ອງມີຄຳຕັດສິນ ຂອງສານປະຊາຊົນທ້ອງຖິ່ນ ບ່ອນທີ່ດິນຕັ້ງຢູ່ເສຍກ່ອນ.

ການອອກໃບສຳເນົາຕາດິນໃນທຸກກໍລະນີ ຕ້ອງປະກາດໃຫ້ມວນຊົນຊາບລ່ວງໜ້າ ສາມສິບວັນ ຕາມລະບຽບການ.

**ມາດຕາ 51. (ໃໝ່) ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ**

ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແມ່ນການບັນທຶກທຸກການເຄື່ອນໄຫວ, ການປ່ຽນແປງ ກ່ຽວກັບສິດນຳໃຊ້ທີ່ດິນ ເຂົ້າໃສ່ປຶ້ມຈົດທະບຽນນິຕິກຳ ຢູ່ທີ່ອົງການຄຸ້ມຄອງທີ່ດິນ ຂອງເມືອງ, ເທດສະບານ ຕາມການມອບໝາຍ ຂອງອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ເພື່ອຕິດຕາມສະພາບ ການເຄື່ອນໄຫວ ແລະ ການປ່ຽນແປງ ຂອງທີ່ດິນນັ້ນ.

## ພາກທີ III
## ສິດ ແລະ ພັນທະຂອງຜູ້ນຳໃຊ້ທີ່ດິນ
## ໝວດທີ 1
## ສິດ ແລະ ພັນທະຂອງພົນລະເມືອງລາວ ກ່ຽວກັບທີ່ດິນ

**ມາດຕາ 52. ການໄດ້ຮັບສິດນຳໃຊ້ທີ່ດິນ**

ບຸກຄົນ ຫຼື ການຈັດຕັ້ງທີ່ຈະໄດ້ຮັບສິດນຳໃຊ້ທີ່ດິນ ບົນພື້ນຖານໃດໜຶ່ງ ດັ່ງຕໍ່ໄປນີ້:

1. ການມອບຂອງລັດ;
2. ການໂອນ;
3. ການສືບທອດມູນມໍລະດົກ.

**ມາດຕາ 53. (ໃໝ່) ສິດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ**

ຜູ້ໄດ້ຮັບສິດນຳໃຊ້ທີ່ດິນມີສິດຕ່າງໆ ດັ່ງຕໍ່ໄປນີ້ :

- ສິດປົກປັກຮັກສາທີ່ດິນ;
- ສິດໃຊ້ທີ່ດິນ;
- ສິດໄດ້ຮັບໝາກຜົນຈາກທີ່ດິນ;
- ສິດໂອນສິດນຳໃຊ້ທີ່ດິນ;
- ສິດສືບທອດສິດນຳໃຊ້ທີ່ດິນ.

**ມາດຕາ 54. ສິດປົກປັກຮັກສາທີ່ດິນ**

ສິດປົກປັກຮັກສາທີ່ດິນ ແມ່ນສິດທີ່ລັດມອບໃຫ້ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງຮັກສາທີ່ດິນ ເພື່ອໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງ ທີ່ແນ່ນອນ.

**ມາດຕາ 55. ສິດໃຊ້ທີ່ດິນ**

ສິດໃຊ້ທີ່ດິນ ແມ່ນສິດໃນການໃຊ້ທີ່ດິນເຂົ້າໃນເປົ້າໝາຍໃດໜຶ່ງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງຜູ້ທີ່ໄດ້ຮັບສິດ ຕາມແຜນການຈັດສັນທີ່ດິນຂອງລັດ.

**ມາດຕາ 56. ສິດໄດ້ຮັບໝາກຜົນຈາກທີ່ດິນ**

ສິດໄດ້ຮັບໝາກຜົນຈາກທີ່ດິນ ທີ່ມີການພັດທະນາແລ້ວ ແມ່ນສິດເກັບກູ້ໝາກຜົນ ຫຼື ລາຍໄດ້ຈາກທີ່ດິນ ທີ່ຕົນໄດ້ຮັບສິດນຳໃຊ້ນັ້ນ ເຊັ່ນ: ໄດ້ຈາກການໃຫ້ເຊົ່າ, ຈາກການເອົາໄປເປັນຮຸ້ນ ຫຼື ຈາກ ການນຳໄປຄ້ຳປະກັນ.

**ມາດຕາ 57. (ໃໝ່) ສິດໂອນສິດນຳໃຊ້ທີ່ດິນ**

ສິດໂອນສິດນຳໃຊ້ທີ່ດິນ ແມ່ນສິດໃນການເອົາສິດນຳໃຊ້ທີ່ດິນໃຫ້ຜູ້ອື່ນ ດ້ວຍການຂາຍ, ການມອບ ຫຼື ການແລກປ່ຽນ.

**ມາດຕາ 58. (ໃໝ່) ສິດສືບທອດສິດນຳໃຊ້ທີ່ດິນ**

ສິດສືບທອດສິດນຳໃຊ້ທີ່ດິນ ແມ່ນສິດໃນການໄດ້ຮັບສິດນຳໃຊ້ທີ່ດິນ ທີ່ມີການພັດທະນາແລ້ວ ຊຶ່ງຕົກທອດມາຍັງ ຜົວ ຫຼື ເມັຍ, ລູກ, ຫຼານ, ພໍ່ແມ່ ຫຼື ຍາດຕິພີ່ນ້ອງໃກ້ຊິດ ຕາມກົດໝາຍ ພາຍຫຼັງທີ່ຜູ້ໄດ້ຮັບສິດນຳໃຊ້ທີ່ດິນໄດ້ເສຍຊີວິດໄປແລ້ວ.

ຖ້າວ່າເນື້ອທີ່ດິນ ທີ່ໄດ້ຮັບຈາກການສືບທອດ ບວກກັບເນື້ອທີ່ດິນ ທີ່ຜູ້ສືບທອດນຳໃຊ້ຢູ່ນັ້ນ ຫາກເກີນອັດຕາປະເພດທີ່ດິນ ທີ່ກົດໝາຍໄດ້ກຳນົດໄວ້ ໃຫ້ປະຕິບັດຕາມມາດຕາ 86 ຂອງກົດໝາຍສະບັບນີ້.

**ມາດຕາ 59. ສິດຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະການຈັດຕັ້ງເສດຖະກິດຂອງລັດ**

ອົງການຈັດຕັ້ງລັດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງເສດຖະກິດຂອງລັດ ທີ່ໄດ້ຮັບສິດໃຊ້ທີ່ດິນ ມີສິດພຽງແຕ່ປົກປັກຮັກສາ ແລະ ໃຊ້ ເທົ່ານັ້ນ ແຕ່ຫາກບໍ່ມີສິດໂອນ, ໃຫ້ເຊົ່າ, ໃຫ້ສຳປະທານ, ເອົາໄປເປັນຮຸ້ນ ຫຼື ນຳໄປຄ້ຳປະກັນແຕ່ຢ່າງໃດ.

**ມາດຕາ 60. ພັນທະຂອງຜູ້ໃຊ້ ແລະ ຜູ້ນຳໃຊ້ທີ່ດິນ**

ຜູ້ໃຊ້ ແລະ ຜູ້ນຳໃຊ້ທີ່ດິນ ມີພັນທະດັ່ງຕໍ່ໄປນີ້ :

1. ນຳໃຊ້ທີ່ດິນ ໂດຍຖືກຕ້ອງຕາມເປົ້າໝາຍ;
2. ບໍ່ສ້າງຄວາມເສຍຫາຍ ໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ;
3. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
4. ປະຕິບັດສະພາວະຄວາມເປັນຈິງຕ້ອງຍອມຮັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ເສຍຄ່າທຳນຽມຕ່າງໆ ກ່ຽວກັບທີ່ດິນ;
6. ປະຕິບັດພັນທະກ່ຽວກັບທີ່ດິນ ເຊັ່ນ: ພາສີທີ່ດິນ, ອາກອນ ຈາກການມອບໂອນ, ອາກອນລາຍໄດ້ຈາກການໃຫ້ເຊົ່າ, ອາກອນຈາກການສືບມູນມໍລະດົກ, ຄ່າທຳນຽມໂອນຊື້, ຄ່າຈົດທະບຽນນິຕິກຳທີ່ດິນ ຕາມກຳນົດເວລາ ສຳລັບຜູ້ນຳໃຊ້ທີ່ດິນ;
7. ປະຕິບັດ ຕາມລະບຽບການອື່ນໆ ກ່ຽວກັບທີ່ດິນ.

**ມາດຕາ 61. ສະພາວະຄວາມເປັນຈິງຕ້ອງຍອມຮັບ**

ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຫາກຖືກປິດລ້ອມດ້ວຍທີ່ດິນຂອງຜູ້ອື່ນ ໂດຍບໍ່ມີທາງຜ່ານອອກສູ່ທົ່ນທາງ ບຸກຄົນ ຫຼື ການຈັດຕັ້ງນັ້ນ ກໍມີສິດຮ້ອງຂໍທາງຜ່ານ ຈາກຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ທີ່ຢູ່ໃກ້ທົ່ນທາງກວ່າໝູ່. ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ທີ່ຖືກຮ້ອງຂໍນັ້ນ ຕ້ອງອະນຸຍາດໃຫ້ທາງຜ່ານ ບ່ອນທີ່ຕົນເຫັນວ່າເໝາະສົມ ແລະ ມີສິດຮ້ອງຂໍການທົດແທນຄ່າເສຍຫາຍ ຕໍ່ຜົນລະປູກ, ສິ່ງກໍ່ສ້າງ ຫຼື ການພັດທະນາບົນທີ່ດິນ ບ່ອນທາງຜ່ານນັ້ນ ຢ່າງສົມເຫດສົມຜົນ.

ໃນກໍລະນີທີ່ມີການເບັ່ງສາຍໄຟຟ້າ, ສາຍໂທລະສັບ, ຂຸດຮ່ອງນ້ຳ, ວາງທໍ່ນ້ຳ ຫຼື ທໍ່ນ້ຳປະປາ ແລະອື່ນໆ ຜ່ານທີ່ດິນຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນຜູ້ໃດຜູ້ໜຶ່ງ ຊຶ່ງພາໃຫ້ຕົ້ນໄມ້, ຜົນລະປູກ ຫຼື ສິ່ງກໍ່ສ້າງຕ່າງໆ ຂອງຜູ້ກ່ຽວຖືກທຳລາຍ ຫຼື ພາໃຫ້ມີຄວາມເສຍຫາຍ ບຸກຄົນຜູ້ນັ້ນມີສິດ ຮ້ອງຂໍເອົາຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳນັ້ນ; ຖ້າວ່າຜູ້ໃຫ້ທາງຜ່ານນັ້ນ ຫາກໄດ້ຮັບຜົນປະໂຫຍດນຳແລ້ວ ກໍບໍ່ໃຫ້ຄິດໄລ່ຄ່າເສຍຫາຍນຳອີກ ເວັ້ນເສຍແຕ່ຄວາມເສຍຫາຍນັ້ນ ຫາກມີຫຼວງຫຼາຍ. ໃນກໍລະນີດັ່ງກ່າວ ແມ່ນໃຫ້ຄິດໄລ່ການທົດແທນຄ່າເສຍຫາຍນັ້ນ ຢ່າງເໝາະສົມ.

**ມາດຕາ 62. (ໃໝ່) ການເສຍສິດໃຊ້ ຫຼື ນຳໃຊ້ທີ່ດິນ**

ຜູ້ທີ່ໄດ້ຮັບສິດໃຊ້ ຫຼື ນຳໃຊ້ທີ່ດິນ ຈະເສຍສິດດັ່ງກ່າວ ໃນກໍລະນີໃດໜຶ່ງ ດັ່ງຕໍ່ໄປນີ້ :

1. ໃຊ້ ຫຼື ນຳໃຊ້ທີ່ດິນ ທີ່ລັດມອບໃຫ້ນັ້ນ ບໍ່ຖືກຕ້ອງຕາມເປົ້າໝາຍ;
2. ບໍ່ເສຍພາສີທີ່ດິນຢ່າງຕໍ່ເນື່ອງ ສາມປີ ພາຍຫຼັງທີ່ໄດ້ມີການກ່າວເຕືອນແລ້ວ;
3. ບໍ່ໃຊ້ ຫຼືບໍ່ນຳໃຊ້ທີ່ດິນ ທີ່ລັດມອບໃຫ້ຕາມທີ່ໄດ້ບົ່ງໄວ້ໃນສັນຍາ ແລະກົດໝາຍວ່າດ້ວຍທີ່ດິນ;
4. ຜູ້ທີ່ຖືກສານຕັດສິນ ໃຫ້ເສຍສິດນຳໃຊ້ທີ່ດິນ.

**ມາດຕາ 63. (ໃໝ່) ການສິ້ນສຸດສິດນຳໃຊ້ທີ່ດິນ**

ສິດນຳໃຊ້ທີ່ດິນ ຂອງບຸກຄົນ ຫຼື ການຈັດຕັ້ງ ຈະສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງຕໍ່ໄປນີ້ :

1. ສະຫຼະສິດນຳໃຊ້ທີ່ດິນ ດ້ວຍຄວາມສະໝັກໃຈ;
2. ລັດໂອນສິດນຳໃຊ້ທີ່ດິນຄືນ ເພື່ອນຳໃຊ້ເຂົ້າໃນສາທາລະນະປະໂຫຍດ;
3. ໂອນສິດນຳໃຊ້ທີ່ດິນ ໃຫ້ຜູ້ອື່ນ;
4. ເສຍຊີວິດ ໂດຍບໍ່ມີຜູ້ສືບທອດ.

## ໝວດທີ 2
## ສິດ ແລະພັນທະຂອງຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ກ່ຽວກັບການເຊົ່າ ຫຼື ສຳປະທານທີ່ດິນ

**ມາດຕາ 64. (ໃໝ່) ການເຊົ່າ ຫຼື ສຳປະທານທີ່ດິນ ໂດຍຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຄົນຕ່າງປະເທດ**

ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ດຳລົງຊີວິດ, ລົງທຶນ ຫຼື ເຄື່ອນໄຫວຢ່າງຖືກຕ້ອງ ຕາມກົດໝາຍ ຢູ່ ສປປ ລາວ ນັ້ນ ກໍສາມາດເຊົ່າ ຫຼື ສຳປະທານທີ່ດິນ ນຳລັດໄດ້.

ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ຕ້ອງການເຊົ່າທີ່ດິນ ທີ່ມີການພັດທະນາແລ້ວ ຈາກພົນລະເມືອງລາວ ຕ້ອງໄດ້ຮັບອະນຸຍາດ ຈາກອົງການປົກຄອງແຂວງ, ນະຄອນ ບ່ອນທີ່ດິນຕັ້ງຢູ່.

ສຳລັບຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ຕ້ອງການເຊົ່າທີ່ດິນທີ່ມີການພັດທະນາແລ້ວ ຈາກພົນລະເມືອງລາວ ແມ່ນອົງການຄຸ້ມຄອງທີ່ດິນແຫ່ງຊາດ ເປັນຜູ້ອະນຸຍາດ ຕາມການສະເໜີຂອງອົງການປົກຄອງແຂວງ, ນະຄອນ ບ່ອນທີ່ດິນຕັ້ງຢູ່.

**ມາດຕາ 65. (ໃໝ່)** ກຳນົດເວລາເຊົ່າ ຫຼື ສຳປະທານທີ່ດິນ

ກຳນົດເວລາເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ໂດຍຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ແມ່ນອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການ ແຕ່ສູງສຸດ ແມ່ນບໍ່ໃຫ້ເກີນ ສາມສິບປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ຕາມຄວາມເຫັນດີຂອງລັດຖະບານ.

ກຳນົດເວລາເຊົ່າທີ່ດິນ ທີ່ມີການພັດທະນາແລ້ວ ຈາກພົນລະເມືອງລາວ ໂດຍຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ສູງສຸດບໍ່ໃຫ້ເກີນ ຊາວປີ ແລະສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ຕາມການຕົກລົງຂອງຄູ່ສັນຍາ ໂດຍໄດ້ຮັບຄວາມເຫັນດີຂອງອົງການ ປົກຄອງແຂວງ, ນະຄອນ ບ່ອນທີ່ດິນນັ້ນຕັ້ງຢູ່.

ສຳລັບການກຳນົດເວລາເຊົ່າ ຫຼື ສຳປະທານທີ່ດິນ ຈາກລັດ ໂດຍຄົນຕ່າງປະເທດ ທີ່ມາລົງທຶນຢູ່ ສປປ ລາວ ແມ່ນອີງຕາມລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການ, ໂຄງການແຕ່ສູງສຸດບໍ່ໃຫ້ເກີນ ຫ້າສິບປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີ ຕາມການຕົກລົງ ຂອງລັດຖະບານ.

ສຳລັບການກຳນົດເວລາເຊົ່າທີ່ດິນ ຈາກພົນລະເມືອງລາວ ໂດຍຄົນຕ່າງປະເທດ ທີ່ມາລົງທຶນຢູ່ ສປປ ລາວ ແມ່ນອີງຕາມລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການ, ໂຄງການ ແຕ່ສູງສຸດບໍ່ໃຫ້ເກີນ ສາມສິບປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍລະນີ ຕາມການຕົກລົງຂອງຄູ່ສັນຍາ ໂດຍໄດ້ຮັບຄວາມເຫັນດີ ຈາກອົງການຄຸ້ມຄອງທີ່ດິນແຫ່ງຊາດ ຕາມການສະເໜີຂອງອົງການປົກຄອງແຂວງ, ນະຄອນ.

ສຳລັບ ເຂດເສດຖະກິດສະເພາະ ແລະ ເຂດເສດຖະກິດພິເສດນັ້ນ ກຳນົດເວລາເຊົ່າ ຫຼື ສຳປະທານທີ່ດິນ ສູງສຸດບໍ່ໃຫ້ເກີນ ເຈັດສິບຫ້າປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ ໂດຍການຮັບຮອງ ຈາກສະພາແຫ່ງຊາດ.

ສຳລັບການເຊົ່າ ຫຼື ສຳປະທານທີ່ດິນ ທີ່ມີເນື້ອທີ່ສູງກວ່າ ສິບພັນເຮັກຕາ ຂຶ້ນໄປຕ້ອງໄດ້ມີການຮັບຮອງ ຈາກສະພາແຫ່ງຊາດ.

ສ່ວນການກຳນົດເວລາເຊົ່າ ຫຼື ສຳປະທານຕົວຈິງນັ້ນ ແມ່ນໃຫ້ອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂ ຂອງແຕ່ລະກິດຈະການ.

ສຳລັບສະຖານທູດ ຫຼື ອົງການຈັດຕັ້ງສາກົນ ທີ່ຕ້ອງການນຳໃຊ້ທີ່ດິນ ຢູ່ ສປປ ລາວ ນັ້ນ ກໍສາມາດເຊົ່າ, ແລກປ່ຽນ, ໂອນ ຕາມການຕົກລົງລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ກັບລັດຖະບານ ປະເທດທີ່ກ່ຽວຂ້ອງ. ໃນກໍລະນີເຊົ່າ ກຳນົດເວລາບໍ່ໃຫ້ເກີນ ເກົ້າສິບເກົ້າປີ.

### ມາດຕາ 66. (ໃໝ່) ສິດໄດ້ຮັບຜົນປະໂຫຍດ ຈາກການເຊົ່າ ຫຼື ສຳປະທານທີ່ດິນ ຂອງຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງ ຂອງບຸກຄົນດັ່ງກ່າວ

ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະການຈັດຕັ້ງຂອງບຸກຄົນດັ່ງກ່າວ ຊຶ່ງໄດ້ ເຊົ່າ ຫຼື ສຳປະທານທີ່ດິນນຳລັດ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ມີສິດດັ່ງນີ້ :

1. ຂາຍຊັບສິນ ທີ່ເປັນກຳມະສິດຂອງຕົນ ທີ່ຕິດພັນກັບສັນຍາເຊົ່າ ຫຼື ສຳປະທານທີ່ດິນ ແຕ່ລັດມີບູລິມະສິດ ໃນການຊື້ຊັບສິນເຫຼົ່ານັ້ນ;
2. ນຳໃຊ້ຊັບສິນ ທີ່ເປັນກຳມະສິດຂອງຕົນ ທີ່ຕິດພັນກັບສັນຍາເຊົ່າ ຫຼື ສຳປະທານທີ່ດິນ ເພື່ອໃຊ້ເປັນຫຼັກຊັບຄ້ຳປະກັນຢູ່ທະນາຄານ ຫຼື ສະຖາບັນການເງິນອື່ນໆ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ. ສຳລັບຊັບຄົງທີ່ນັ້ນ ຕ້ອງໄດ້ຮັບຄວາມເຫັນດີຈາກລັດເສຍກ່ອນ;
3. ໃຫ້ເຊົ່າຕໍ່ສິດນຳໃຊ້ທີ່ດິນ, ແຕ່ຕ້ອງໄດ້ຮັບຄວາມເຫັນດີ ຈາກລັດເສຍກ່ອນ ແລະ ສັນຍາເຊົ່າຕໍ່ ບໍ່ໃຫ້ເກີນ ອາຍຸນຳໃຊ້ທີ່ຍັງເຫຼືອ ຂອງສັນຍາແມ່;
4. ສືບທອດສັນຍາເຊົ່າ ຫຼື ສຳປະທານທີ່ດິນ ຕາມອາຍຸຂອງສັນຍາ;

5. ໃຊ້ສັນຍາເຊົ່າ ຫຼື ສຳປະທານທີ່ດິນ ເພື່ອຮ່ວມທຶນກັບບຸກຄົນອື່ນ ແຕ່ຕ້ອງໄດ້ຮັບຄວາມ ເຫັນດີຈາກລັດເສັຍກ່ອນ.

ສຳລັບການເຊົ່າທີ່ດິນ ຂອງຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະການຈັດຕັ້ງ ຂອງບຸກຄົນດັ່ງກ່າວ ຈາກພົນລະເມືອງລາວ ກໍໃຫ້ປະຕິບັດເຊັ່ນດຽວກັນ.

## ມາດຕາ 67. (ໃໝ່) ພັນທະຂອງຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ໃນການເຊົ່າ ຫຼື ສຳປະທານທີ່ດິນ

ພັນທະ ຂອງຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ໃນການເຊົ່າ ຫຼື ສຳປະທານທີ່ດິນ ມີດັ່ງນີ້ :

1. ໃຊ້ທີ່ດິນໂດຍຖືກຕ້ອງຕາມເປົ້າໝາຍ;
2. ບໍ່ສ້າງຄວາມເສັຍຫາຍ ໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ;
3. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
4. ປະຕິບັດສະພາວະຄວາມເປັນຈິງຕ້ອງຍອມຮັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ເສັຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ ແລະ ຄ່າທຳນຽມອື່ນໆ ກ່ຽວກັບທີ່ດິນຢ່າງຄົບຖ້ວນ;
6. ປະຕິບັດຕາມລະບຽບການ ແລະ ເງື່ອນໄຂຂອງການເຊົ່າ ຫຼື ການສຳປະທານ ຢ່າງຄົບຖ້ວນ.

# ໝວດທີ 3
# ການທົດແທນຄ່າເສັຍຫາຍ

## ມາດຕາ 68. ສາເຫດຂອງການທົດແທນຄ່າເສັຍຫາຍ

ສາເຫດ ຂອງການທົດແທນຄ່າເສັຍຫາຍ ມີດັ່ງນີ້ :

1. ການກໍ່ຄວາມເສັຍຫາຍ ຍ້ອນການລະເມີດລະບຽບກົດໝາຍ;
2. ການກໍ່ຄວາມເສັຍຫາຍ ຈາກສະພາວະຄວາມເປັນຈິງຕ້ອງຍອມຮັບ;
3. ການກໍ່ຄວາມເສັຍຫາຍ ຈາກການໂອນສິດນຳໃຊ້ທີ່ດິນຄືນ.

## ມາດຕາ 69. ການທົດແທນຄ່າເສັຍຫາຍ ຍ້ອນການລະເມີດລະບຽບກົດໝາຍ

ບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ທີ່ດິນ ຫາກໄດ້ກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ອື່ນ ຫຼື ສາທາລະນະ ຍ້ອນການລະເມີດລະບຽບກົດໝາຍແລ້ວ ຕ້ອງໄດ້ທົດແທນຄ່າເສັຍຫາຍ ທີ່ເກີດຈາກການກະທຳຂອງຕົນ.

**ມາດຕາ 70. ການທົດແທນຄ່າເສັຍຫາຍ ຈາກສະພາວະຄວາມເປັນຈິງຕ້ອງຍອມຮັບ**

ບຸກຄົນ ຫຼື ການຈັດຕັ້ງໃດຫາກໄດ້ຮັບສິດໃຊ້ທີ່ດິນ ຈາກສະພາວະຄວາມເປັນຈິງຕ້ອງຍອມຮັບຂອງຜູ້ອື່ນທີ່ໄດ້ຈົ່ງທາງທຽວ, ຮ່ອງນ້ຳໃຫ້ແກ່ຕົນ ຊຶ່ງພາໃຫ້ພືນລະປູກ, ສິ່ງກໍ່ສ້າງຂອງຜູ້ອື່ນ ຫຼື ຂອງສາທາລະນະ ໄດ້ຮັບຄວາມເສັຍຫາຍແລ້ວ ບຸກຄົນ ຫຼື ການຈັດຕັ້ງນັ້ນ ຕ້ອງໄດ້ໃຊ້ແທນຄ່າເສັຍຫາຍດັ່ງກ່າວ ຢ່າງສົມເຫດສົມຜົນ.

**ມາດຕາ 71. (ໃໝ່) ການທົດແທນຄ່າເສັຍຫາຍ ທີ່ເກີດຈາກການໂອນເອົາສິດນຳໃຊ້ທີ່ດິນຄືນ**

ເມື່ອມີຄວາມຈຳເປັນທີ່ຕ້ອງໄດ້ນຳໃຊ້ທີ່ດິນ ຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເພື່ອຮັບໃຊ້ສາທາລະນະປະໂຫຍດນັ້ນ ລັດຈະໂອນເອົາສິດນຳໃຊ້ທີ່ດິນນັ້ນຄືນ ແຕ່ຕ້ອງໄດ້ໃຊ້ແທນຄ່າເສັຍຫາຍ ໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງນັ້ນ ຢ່າງສົມເຫດສົມຜົນ.

ເພື່ອຮັບປະກັນການທົດແທນໃນການໂອນເອົາສິດນຳໃຊ້ທີ່ດິນຄືນນັ້ນ ຕ້ອງມີທີ່ດິນສຳຮອງໃນອັດຕາ ຫ້າສ່ວນຮ້ອຍ ຂອງເນື້ອທີ່ດິນທັງໝົດ ຂອງບ້ານ, ເມືອງ, ເທດສະບານ, ແຂວງ ຫຼື ນະຄອນ.

ໃນເວລາທີ່ຍັງບໍ່ທັນໄດ້ໃຊ້ທີ່ດິນສຳຮອງດັ່ງກ່າວ ຈະໃຫ້ບຸກຄົນ ຫຼື ການຈັດຕັ້ງ ເຊົ່າຊົ່ວຄາວກໍໄດ້.

**ມາດຕາ 72. ການກຳນົດຄ່າເສັຍຫາຍ**

ໃນການທົດແທນຄ່າເສັຍຫາຍນັ້ນ ຕ້ອງມີຄະນະກຳມະການ ຊຶ່ງປະກອບດ້ວຍຜູ້ຕາງໜ້າຂອງ ພາກສ່ວນທີ່ກ່ຽວຂ້ອງ ທຳການຕີລາຄາ ເພື່ອກຳນົດຄ່າເສັຍຫາຍ.

## ໝວດທີ 4
## ທີ່ດິນ ທີ່ອົງການປົກຄອງ ໄດ້ມອບສິດນຳໃຊ້ ໃຫ້ປະຊາຊົນ ໃນສະໄໝຕໍ່ສູ້ກູ້ຊາດ ແລະ ທີ່ດິນຂອງຜູ້ທີ່ປະໜີໄປຕ່າງປະເທດ

**ມາດຕາ 73. (ໃໝ່) ທີ່ດິນ ທີ່ອົງການປົກຄອງ ໄດ້ມອບສິດນຳໃຊ້ໃຫ້ປະຊາຊົນ ໃນສະໄໝຕໍ່ສູ້ກູ້ຊາດ**

ລັດບໍ່ຮັບຮູ້ການທວງເອົາຄືນ ທີ່ດິນທີ່ອົງການປົກຄອງໄດ້ມອບສິດນຳໃຊ້ ໃຫ້ປະຊາຊົນໃນສະໄໝຕໍ່ສູ້ກູ້ຊາດ.

**ມາດຕາ 74. ທີ່ດິນ ຂອງຜູ້ທີ່ປະໜີຈາກທ້ອງຖິ່ນ ຂອງຕົນ ໃນສະໄໝຕໍ່ສູ້ກູ້ຊາດ**

ລັດບໍ່ຮັບຮູ້ການທວງເອົາຄືນ ທີ່ດິນທີ່ເຈົ້າຂອງໄດ້ປະໜີຈາກທ້ອງຖິ່ນຂອງຕົນ ໃນສະໄໝຕໍ່ສູ້ກູ້ຊາດ.

**ມາດຕາ 75. ທີ່ດິນ ທີ່ໄດ້ມອບໃຫ້ເປັນຊັບສິນບັດສ່ວນລວມ**

ລັດ ບໍ່ຮັບຮູ້ການທວງເອົາຄືນ ທີ່ດິນຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ມອບໃຫ້ເປັນຊັບສິນບັດສ່ວນລວມ ໃນສະໄໝຕໍ່ສູ້ກູ້ຊາດ ກໍຄືໃນສະໄໝປັດຈຸບັນ.

**ມາດຕາ 76. ທີ່ດິນ ຂອງຜູ້ທີ່ປະໜີໄປຕ່າງປະເທດ**

ລັດບໍ່ຮັບຮູ້ການທວງເອົາຄືນ ທີ່ດິນຂອງຜູ້ທີ່ໄດ້ປະໜີໄປຕ່າງປະເທດ.

## ພາກທີ IV
## ການກວດກາ ການນຳໃຊ້ທີ່ດິນ

**ມາດຕາ 77. ການກວດກາ ການໃຊ້ທີ່ດິນ**

ການກວດກາການໃຊ້ທີ່ດິນ ແມ່ນການຕິດຕາມ ເບິ່ງການປົກປັກຮັກສາ, ການພັດທະນາ ແລະ ການໃຊ້ ທີ່ດິນຂອງບຸກຄົນ ແລະ ການຈັດຕັ້ງ ເພື່ອໃຫ້ຖືກຕ້ອງຕາມເປົ້າໝາຍ, ລະບຽບກົດໝາຍ ແລະ ມີປະສິດທິຜົນ.

**ມາດຕາ 78. (ໃໝ່) ອົງການການກວດກາ ການໃຊ້ທີ່ດິນ**

ການກວດກາ ການໃຊ້ທີ່ດິນແຕ່ລະປະເພດ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບກົດໝາຍ ແມ່ນໜ້າທີ່ຮັບຜິດຊອບ ຂອງອົງການຄຸ້ມຄອງທີ່ດິນປະເພດທີ່ກ່ຽວຂ້ອງຂັ້ນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

ສຳລັບການມອບ, ການໃຫ້ເຊົ່າ ຫຼື ສຳປະທານທີ່ດິນ ແລະ ການຂຶ້ນທະບຽນທີ່ດິນ ແມ່ນອົງການຄຸ້ມຄອງທີ່ດິນແຫ່ງຊາດ ເປັນຜູ້ກວດກາ.

**ມາດຕາ 79. ສິດ ແລະ ໜ້າທີ່ ໃນການກວດກາ ການໃຊ້ທີ່ດິນ**

ອົງການຄຸ້ມຄອງທີ່ດິນ ມີສິດ ແລະ ໜ້າທີ່ ໃນການກວດກາ ການໃຊ້ທີ່ດິນ ດັ່ງນີ້ :

1. ທວງເອົາເອກະສານ ທີ່ຈຳເປັນກ່ຽວກັບການກວດກາຈາກ ບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງ;
2. ລົງກວດກາສະຖານທີ່ທີ່ດິນ;
3. ໃຫ້ຄຳແນະນຳແກ່ຜູ້ໃຊ້ ແລະ ຜູ້ນຳໃຊ້ທີ່ດິນ;
4. ສັ່ງໂຈະ ຫຼື ໃຫ້ຢຸດເຊົາຊົ່ວຄາວ ກິດຈະການກ່ຽວກັບການໃຊ້ທີ່ດິນ ທີ່ບໍ່ຖືກຕ້ອງ;
5. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາຖອນສິດໃຊ້ ຫຼື ນຳໃຊ້ທີ່ດິນ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການກວດກາການໃຊ້ ຫຼື ນຳໃຊ້ທີ່ດິນ.

## ພາກທີ V
## ການແກ້ໄຂບັນຫາທີ່ດິນ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 80. (ໃໝ່) ການແກ້ໄຂບັນຫາ ທີ່ມີລັກສະນະບໍລິຫານ ກ່ຽວກັບທີ່ດິນ

ການແກ້ໄຂບັນຫາ ທີ່ມີລັກສະນະບໍລິຫານ ກ່ຽວກັບທີ່ດິນ ເຊັ່ນ: ການນຳໃຊ້ທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ, ການນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ, ຕາມລະບຽບກົດໝາຍ, ການບໍ່ນຳໃຊ້ທີ່ດິນຕາມກຳນົດເວລາພາຍຫຼັງທີ່ໄດ້ຮັບມອບ, ການບໍ່ເສັຍພາສີ, ອາກອນ ຫຼື ຄ່າທຳນຽມທີ່ດິນ ຕາມລະບຽບການທີ່ໄດ້ກຳນົດໄວ້ ແລະບັນຫາທີ່ດິນອື່ນໆ ທີ່ມີລັກສະນະບໍລິຫານນັ້ນ ແມ່ນອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງ ໂດຍປະສານສົມທົບກັບອົງການປົກຄອງຂັ້ນຂອງຕົນ ບ່ອນທີ່ດິນຕັ້ງຢູ່ ເປັນຜູ້ແກ້ໄຂ.

ຖ້າວ່າຜູ້ໃຊ້ ຫຼືຜູ້ນຳໃຊ້ທີ່ດິນ ຫາກບໍ່ພໍໃຈ ຕໍ່ຄຳຕົກລົງແກ້ໄຂແລ້ວ ກໍມີສິດສະເໜີ ຕໍ່ອົງການຂັ້ນເທິງຖັດນັ້ນເປັນຜູ້ແກ້ໄຂ.

### ມາດຕາ 81. (ໃໝ່) ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນ

ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນ ເຊັ່ນ: ການສືບທອດມູນມໍລະດົກທີ່ດິນ ທີ່ມີການພັດທະນາແລ້ວ, ການໂອນສິດນຳໃຊ້ທີ່ດິນ ແລະ ສັນຍາທາງແພ່ງອື່ນໆກ່ຽວກັບທີ່ດິນນັ້ນ ແມ່ນສານປະຊາຊົນເປັນຜູ້ພິຈາລະນາຕັດສິນ ຕາມກົດໝາຍ.

ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນນັ້ນ ແມ່ນໃຫ້ອົງການປົກຄອງບ້ານ ບ່ອນທີ່ດິນຕັ້ງຢູ່ ໄກ່ເກັ່ຍເສັຍກ່ອນ, ຖ້າຫາກບໍ່ສາມາດຕົກລົງກັນໄດ້ ກໍສະເໜີໃຫ້ອົງການປົກຄອງເມືອງ, ເທດສະບານ ເປັນຜູ້ໄກ່ເກັ່ຍ; ຖ້າຫາກຍັງບໍ່ສາມາດແກ້ໄຂໄດ້ ຄູ່ກໍລະນີກໍມີສິດຮ້ອງຟ້ອງຕໍ່ສານ.

### ມາດຕາ 82. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໃຊ້ ຫຼື ນຳໃຊ້ທີ່ດິນ ໂດຍຖືກຕ້ອງຕາມລະບຽບກົດໝາຍ, ປົກປັກຮັກສາ, ພັດທະນາທີ່ດິນຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ, ໄດ້ຮັບຄວາມສະດວກ ໃນການເຊົ່າ ຫຼື ສຳປະທານທີ່ດິນ ແລະ ນະໂຍບາຍອື່ນໆ ຊຶ່ງລັດຖະບານເປັນຜູ້ກຳນົດ.

### ມາດຕາ 83. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງໃດ ທີ່ໃຊ້ທີ່ດິນ ຫາກໄດ້ລະເມີດລະບຽບ ກົດໝາຍກ່ຽວກັບທີ່ດິນ, ກໍ່ຄວາມເສັຍຫາຍ ໃຫ້ແກ່ສາທາລະນະ, ສິ່ງແວດລ້ອມ, ຊັບສິນ, ສຸຂະພາບ ຫຼື ຊີວິດຂອງຜູ້ອື່ນ ຈະຖືກປັບໄໝ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

ນອກຈາກໂທດຕົ້ນຕໍ ທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ຜູ້ກະທຳຜິດ ອາດຈະໄດ້ຮັບໂທດເພີ່ມອີກ ເຊັ່ນ: ຖອນໃບຢັ້ງຢືນທີ່ດິນ, ໃບຕາດິນ ຫຼື ໃບອະນຸຍາດອື່ນໆ ກ່ຽວກັບການໃຊ້ ຫຼື ນຳໃຊ້ທີ່ດິນ.

**ມາດຕາ 84. ມາດຕະການທາງອາຍາ**

ໃນການປະຕິບັດວຽກງານ ກ່ຽວກັບທີ່ດິນ, ບຸກຄົນໃດຫາກໄດ້ລະເມີດລະບຽບກົດໝາຍ ເຊັ່ນ: ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ອຳນາດເກີນຂອບເຂດ, ຮັບສິນບົນ, ປອມແປງເອກະສານ ເພື່ອຫາຜົນປະໂຫຍດສ່ວນຕົວ ທີ່ໄດ້ກໍ່ຄວາມເສັຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ຂອງບຸກຄົນອື່ນ ຈະຖືກລົງໂທດທາງອາຍາ ພ້ອມທັງໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 85. (ໃໝ່) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະ ປະຊາທິປະໄຕ ປະຊາຊົນລາວ ມີໜ້າທີ່ອອກດຳລັດ ແລະຂໍ້ກຳນົດລະອຽດ ເພື່ອຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ໃຫ້ດຳເນີນການກວດກາ ກ່ຽວກັບທີ່ດິນຢ່າງເປັນລະບົບ ໃນຂອບເຂດທົ່ວປະເທດ ໂດຍສະເພາະ ແມ່ນການກວດກາກ່ຽວກັບທີ່ມາຂອງສິດນຳໃຊ້ ທີ່ດິນ, ຂະໜາດຂອງທີ່ດິນ, ການໃຊ້ ແລະ ການນຳໃຊ້ທີ່ດິນ.

**ມາດຕາ 86. (ໃໝ່) ກຳນົດເວລາແກ້ໄຂກ່ຽວກັບທີ່ດິນ**

ພົນລະເມືອງລາວ ທີ່ມີທີ່ດິນຢ່າງຖືກຕ້ອງ ຕາມລະບຽບກົດໝາຍ ໃນໄລຍະຜ່ານມາ ແຕ່ມີເນື້ອທີ່ເກີນກວ່າອັດຕາທີ່ໄດ້ກຳນົດໄວ້ ໃນມາດຕາ 17, 21 ແລະ 42 ຂອງກົດໝາຍສະບັບນີ້ ຕ້ອງແກ້ໄຂໃຫ້ຖືກຕ້ອງພາຍໃນກຳນົດ ສາມປີ ນັບແຕ່ມື້ ລັດຖະບານໄດ້ອອກແຈ້ງການກ່ຽວກັບການແກ້ໄຂເນື້ອທີ່ດິນສ່ວນເກີນ ຢ່າງເປັນທາງການເປັນຕົ້ນໄປ. ຖ້າຜູ້ກ່ຽວຫາກຍັງຢາກສືບຕໍ່ນຳໃຊ້ທີ່ດິນສ່ວນເກີນນັ້ນຢູ່ ຈະຕ້ອງໄດ້ເສັຍພາສີເພີ່ມສູງກວ່າອັດຕາປົກກະຕິ, ຖ້າບໍ່ດັ່ງນັ້ນຜູ້ກ່ຽວກໍຈະໝົດສິດນຳໃຊ້ທີ່ດິນສ່ວນເກີນດັ່ງກ່າວ.

ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະການຈັດຕັ້ງ ຂອງບຸກຄົນດັ່ງກ່າວ ທີ່ມີທີ່ດິນ ໃນໄລຍະຜ່ານມາ ຕ້ອງແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍທີ່ດິນສະບັບນີ້ ພາຍໃນກຳນົດເວລາ ສາມປີ ນັບແຕ່ວັນລັດຖະບານ ໄດ້ອອກແຈ້ງການຢ່າງເປັນທາງການ ໃຫ້ສັງຄົມຊາບຢ່າງທົ່ວເຖິງ. ຖ້າຫາກກາຍກຳນົດນີ້ແລ້ວ ຜູ້ກ່ຽວຈະໝົດສິດນຳໃຊ້ທີ່ດິນດັ່ງກ່າວ, ຫາກຍັງຢາກສືບຕໍ່ນຳໃຊ້ ກໍຈະມີບູລິມະສິດ ໃນການຂໍເຊົ່າ ຫຼື ສຳປະທານທີ່ດິນນັ້ນ.

ສຳລັບສະຖານທູດ ແລະ ອົງການຈັດຕັ້ງສາກົນນັ້ນ ລັດຖະບານ ຈະເປັນຜູ້ຕົກລົງ.

**ມາດຕາ 87. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 01/97 ສພຊ, ລົງວັນທີ 12 ເມສາ 1997.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ